



ການຈັດທັດສະນະສຶກສາໃຫ້ແກ່ນັກຂ່າວ 2 ແຂວງພາກກາງ ແລະ 4 ແຂວງພາກໃຕ້ ທີ່ແຂວງຄຳມ່ວນ

ໃນວັນທີ 6-8 ກໍລະກົດ 2026, ສະມາຄົມນັກຂ່າວລາວ ແລະ ອົງການແຄຣ໌ ນານາຊາດ ປະຈຳ ສປປ ລາວ ໄດ້ນຳພາ ທີມສື່ມວນຊົນ 4 ແຂວງພາກໃຕ້, 2 ແຂວງພາກກາງ ແລະ ຜູ້ນຳໃຊ້ສື່ອອນລາຍທົ່ວໄປ ຈຳນວນ 36 ຄົນ, ຍິງ 17 ຄົນ ເຂົ້າຮ່ວມທັດສະນະສຶກສາ ແລະ ຮຽນຮູ້ເລື່ອງການທ່ອງທ່ຽວອະນຸລັກ ໂດຍຊຸມຊົນມີສ່ວນຮ່ວມ ຜ່ານແຜນພັດທະນາທີ່ ຍືນຍົງຂອງ ບໍລິສັດ ເຂື່ອນໄຟຟ້ານ້ຳເທີນ 2 ເຊັ່ນ: ສຳພາດຜູ້ປະກອບການທຸລະກິດ ທີ່ມີສ່ວນຮ່ວມໃນການຮັກສາ ສິ່ງແວດລ້ອມ, ການຜະລິດປາແຫ້ງຂອງຊຸມຊົນ, ສູນໃຫ້ຂໍ້ມູນຂອງອຸທິຍານແຫ່ງຊາດນາກາຍ-ນ້ຳເທີນ, ສູນການສຶກສາ ເພື່ອໃຫ້ທຶນພາຍໃນແກ່ນັກຮຽນ ແລະ ຢ້ຽມຊົມເຂື່ອນຜະລິດໄຟຟ້າຂອງ ບໍລິສັດເຂື່ອນໄຟຟ້ານ້ຳເທີນ 2.

ນີ້ເປັນການທັດສະນະທີ່ມີຄຸນຄ່າ ແລະ ເປັນປະໂຫຍດຫຼາຍ ສຳລັບນັກສື່ມວນຊົນ ໃນການຜະລິດບົດຂ່າວທີ່ກ່ຽວກັບການ ພັດທະນາສີຂຽວ ແລະ ການມີສ່ວນຮ່ວມຂອງຊຸມຊົນໃນການອະນຸລັກສິ່ງແວດລ້ອມ.





ຝຶກອົບຮົມການລາຍງານຂ່າວບັນຫາສີຂຽວໃຫ້ແກ່ນັກຂ່າວ 4 ແຂວງພາກໃຕ້ ແລະ 2 ແຂວງພາກກາງ

ໃນວັນທີ 9-10 ກໍລະກົດ 2026, ສະມາຄົມນັກຂ່າວລາວ ຮ່ວມກັບ ອົງການແຄຣ໌ ນານາຊາດ ປະຈຳ ສປປ ລາວ ໄດ້ ສືບຕໍ່ຈັດຊຸດຝຶກອົບຮົມການລາຍງານຂ່າວບັນຫາສີຂຽວ ໃຫ້ແກ່ຕາງໜ້າສື່ມວນຊົນຈາກ 4 ແຂວງພາກໃຕ້ ແລະ 2 ແຂວງພາກກາງ ພາຍໃຕ້ໂຄງການ GAMCIL ທີ່ ເມືອງ ທ່າແຂກ, ແຂວງ ຄຳມ່ວນ.

ການຝຶກອົບຮົມໃນຄັ້ງນີ້ ແມ່ນໃຫ້ກຽດເປັນປະທານເປີດງານໂດຍ ທ່ານ ນວນຕາ ແກ້ວນະວົງ, ກຳມະການພັກແຂວງ ຫົວໜ້າຄະນະໂຄສະນາອົບຮົມແຂວງ ຄຳມ່ວນ ແລະ ທ່ານນາງ ບົວຄຳ ດວງປັນຍາ, ຫົວໜ້າໂຄງການ GAMCIL.

ການຝຶກອົບຮົມໃນຄັ້ງນີ້ແມ່ນເນັ້ນໃສ່ ຄວາມເຂົ້າໃຈກ່ຽວກັບບົດບາດຍິງ-ຊາຍ ເພື່ອໃຫ້ການນຳສະເໜີຂ່າວມີຄວາມ ກວມລວມ ແລະ ເທົ່າທຽມ, ການສົ່ງເສີມສຽງຂອງທຸກກຸ່ມຄົນໃນສັງຄົມ ແລະ ເພື່ອສ້າງຈິດສຳນຶກ ແລະ ກະຕຸ້ນໃຫ້ ສັງຄົມຫັນມາໃສ່ໃຈກັບບັນຫາສີຂຽວຢ່າງຍືນຍົງ.

ຫຼັງຈາກຈົບຊຸດຝຶກອົບຮົມຄັ້ງນີ້, ຄາດວ່າຕາງໜ້າສື່ມວນຊົນທັງ 6 ແຂວງ ຈະສາມາດຍົກລະດັບຂີດຄວາມສາມາດ ໃນ ການຜະລິດ ແລະ ນຳສະເໜີຂ່າວສານ ທີ່ບໍ່ພຽງແຕ່ສະທ້ອນເຖິງບັນຫາສິ່ງແວດລ້ອມ (ບັນຫາສີຂຽວ) ເທົ່ານັ້ນ, ແຕ່ຍັງ ສາມາດສອດແຊກ ມິຕິດ້ານບົດບາດຍິງ-ຊາຍ ເຂົ້າໃນເນື້ອຫາຂ່າວ ເພື່ອໃຫ້ສັງຄົມເກີດຄວາມຕື່ນຕົວ, ມີສ່ວນຮ່ວມ ໃນການປົກປັກຮັກສາທຳມະຊາດຮ່ວມກັນ.









ສະມາຄົມນັກຂ່າວລາວ ແລະ ອົງການແຄຣ໌ ລາວ ເຂົ້າຮ່ວມງານວາງສະແດງ ໃນກອງປະຊຸມວຽກງານສື່ມວນຊົນທົ່ວປະເທດ ຄັ້ງທີ I

ສະມາຄົມນັກຂ່າວລາວ ຮ່ວມກັບ ອົງການແຄຣ໌ ນານາຊາດ ພາຍໃຕ້ໂຄງການ GAMCIL ຮ່ວມວາງສະແດງຜົນງານ ແລະ ຂຶ້ນມີຄຳເຫັນ ໃນໂອກາດກອງປະຊຸມວຽກງານສື່ມວນຊົນທົ່ວປະເທດ ຄັ້ງທີ I ໃນລະຫວ່າງວັນທີ 13-15 ກໍລະກົດ 2026 ນີ້, ທີ່ຫໍປະຊຸມແຫ່ງຊາດ, ນະຄອນຫຼວງວຽງຈັນ.

ເພື່ອເປັນການສະເຫຼີມສະຫຼອງງານທີ່ມີຄວາມໝາຍຄວາມສຳຄັນລະດັບຊາດນີ້, ສະມາຄົມນັກຂ່າວລາວ ຮ່ວມກັບ ອົງການແຄຣ໌ ນານາຊາດ ປະຈຳ ສປປ ລາວ ພາຍໃຕ້ໂຄງການ GAMCIL ໄດ້ຮ່ວມກັນຈັດບູດວາງສະແດງຜົນງານ ເພື່ອນຳສະເໜີຜົນສຳເລັດ ແລະ ຄວາມຄືບໜ້າຂອງການຮ່ວມມື ຫຼັກໆ ແມ່ນການພັດທະນາຂີດຄວາມສາມາດດ້ານ ການສື່ສານ ແລະ ວຽກງານສື່ມວນຊົນໃນໄລຍະຜ່ານມາ ເຊິ່ງໄດ້ຮັບຄວາມສົນໃຈຢ່າງຫຼວງຫຼາຍ ຈາກຄະນະການນຳ ຂັ້ນສູງ ແລະ ຜູ້ເຂົ້າຮ່ວມງານ.

ໃນໂອກາດອັນດີນີ້, ທ່ານ ປະທານສະມາຄົມນັກຂ່າວລາວ ໄດ້ຂຶ້ນມີຄຳເຫັນຢ່າງມີເນື້ອໃນເລິກເຊິ່ງ ໃນຫົວຂໍ້: "ການ ປົກປ້ອງສິດ ແລະ ຜົນປະໂຫຍດຂອງສື່ມວນຊົນໃນຍຸກອຸດສາຫະກຳ 4.0". ທ່ານໄດ້ເນັ້ນໜັກວ່າ: *"ສະມາຄົມນັກຂ່າວ ລາວ ຍາມໃດກໍຍັງຄົງມຸ່ງໝັ້ນທີ່ຈະສະໜັບສະໜຸນ ແລະ ຍົກລະດັບທັກສະຂອງນັກຂ່າວລາວ ໃຫ້ສາມາດຜະລິດຂ່າວ ຢ່າງເປັນມືອາຊີບໃນຍຸກດິຈິຕອນ. ພ້ອມກັນນັ້ນ, ສະມາຄົມນັກຂ່າວລາວ ແມ່ນມີຄວາມພ້ອມຢ່າງເຕັມສ່ວນ ທີ່ຈະ ຮ່ວມມືກັບທຸກພາກສ່ວນ ເພື່ອຮ່ວມກັນນຳເອົາວຽກງານສື່ມວນຊົນລາວ ກ້າວໄປສູ່ຄຸນນະພາບ ແລະ ມາດຕະຖານໃໝ່ ທີ່ສູງຂຶ້ນເລື້ອຍໆ ໃນຍຸກອຸດສາຫະກຳ 4.0 ນີ້ ໂດຍຫວັງຢ່າງຍິ່ງວ່າ ຈະໄດ້ຮັບການຊີ້ນຳ-ນຳພາ ຈາກອົງການຈັດຕັ້ງ ພາກລັດຂັ້ນເທິງ ຢ່າງໃກ້ຊິດ".*

ການຮ່ວມມືລະຫວ່າງ ສະມາຄົມນັກຂ່າວລາວ ແລະ ອົງການແຄຣ໌ ພາຍໃຕ້ໂຄງການ GAMCIL ໃນຄັ້ງນີ້ ຖືເປັນ ບາດກ້າວສຳຄັນ ໃນການຮ່ວມກັນຊຸກຍູ້ ແລະ ພັດທະນາສື່ມວນຊົນລາວ ໃຫ້ມີຄວາມເຂັ້ມແຂງ, ສາມາດປັບໂຕເຂົ້າ ກັບຍຸກເຕັກໂນໂລຊີ ແລະ ຫັນປ່ຽນສູ່ຄຸນນະພາບໃໝ່ ຢ່າງແຂງແຮງ ຕາມທິດທາງຂອງພັກ ແລະ ລັດຖະບານ ວາງໄວ້.











ງານສະລິດເນື້ອໃນ ແລະ ເຜີຍແຜ່ຫຼັກສູດອອນລາຍ ທີ່ເວັບໄຊ້ ຂອງສະມາຄົມນັກຂ່າວລາວ ທີ່ແຂວງຫຼວງພະບາງ

ໃນວັນທີ 24 ກໍລະກົດ 2026 ສະມາຄົມນັກຂ່າວລາວ ຮ່ວມກັບ ອົງການ ແຄຣ໌ ນານາຊາດ ປະຈຳ ສປປ ລາວ ໄດ້ມາ ສືບຕໍ່ຈັດການຝຶກອົບຮົມ 1 ວັນເຕັມ ຢູ່ທີ່ ມະຫາວິທະຍາໄລ ສຸພານຸວົງ, ນະຄອນຫຼວງພະບາງ.

ງານນີ້ໄດ້ຮັບຄວາມສົນໃຈຈາກໄວໜຸ່ມຫຼາຍກວ່າ 80 ຄົນ ເພື່ອແນະນຳຫຼັກສູດອອນລາຍຮຽນຮູ້ດ້ວຍຕົນເອງ ເທິງເວັບໄຊ ຂອງສະມາຄົມ. ກິດຈະກຳຄັ້ງນີ້ມີຈຸດປະສົງເພື່ອເຜີຍແຜ່ ຫຼັກສູດການຮຽນຮູ້ດ້ວຍຕົນເອງ ເຊິ່ງຜູ້ທີ່ເຂົ້າຮຽນ ຈະໄດ້ເຂົ້າເຖິງ ຄວາມຮູ້ການລາຍງານຂ່າວບັນຫາສີຂຽວ, ການນຳໃຊ້ດິຈິຕອນເຂົ້າໃນການສະລິດເນື້ອໃນ, ກົດໝາຍສື່ມວນຊົນ, ການ ສ້າງແຄມເປນກ່ຽວກັບສິ່ງແວດລ້ອມ ແລະ ອີກຫຼາກຫຼາຍຄວາມຮູ້ທີ່ພ້ອມຈະໃຫ້ໄດ້ຮຽນ.

ຜູ້ທີ່ສຳເລັດການເຂົ້າຮຽນຫຼັກສູດນີ້ຈະສາມາດເຂົ້າໃຈເຖິງບັນຫາສິ່ງແວດລ້ອມທີ່ກຳລັງເກີດຂຶ້ນໃນປັດຈຸບັນ, ສາມາດ ສະລິດເນື້ອໃນທີ່ດຶງດູດຜູ້ຊົມໄດ້, ຮູ້ເຕັກນິກການນຳໃຊ້ເຄື່ອງມືດິຈິຕອນຊ່ວຍໃນການສະລິດເນື້ອໃນ, ຮູ້ກ່ຽວກັບກົດໝາຍ ສື່ມວນຊົນ ແລະ ທີ່ສຳຄັນ ຈະໄດ້ຮັບໃບຢັ້ງຢືນຈາກໂຄງການ.





ກອງປະຊຸມອອກແບບການແຂ່ງຂັນຜະລິດຕະພັນສື່ ກ່ຽວກັບການພັດທະນາສີຂຽວ





ເມື່ອວັນທີ 6 ສິງຫາ 2026 ທີ່ຜ່ານມາ, ສະມາຄົມນັກຂ່າວລາວ ຮ່ວມກັບ ອົງການແຄຣ໌ ນານາຊາດ ປະຈຳ ສປປ ລາວ ໄດ້ຈັດກອງປະຊຸມອອກແບບການ ແຂ່ງຂັນຜະລິດຕະພັນສື່ສີຂຽວ ພາຍໃຕ້ໂຄງການ GAMCIL ໂດຍໄດ້ຮັບການ ຮ່ວມມື ຈາກ ທ່ານ ສົມສັກ ສະກຸນຄຳ, ຮອງຫົວໜ້າກົມສື່ມວນຊົນ, ຄະນະ ໂຄສະນາອົບຮົມສູນກາງພັກ, ທ່ານ ສະຫວັນຄອນ ຣາຊມຸນຕຣີ, ປະທານ ສະມາຄົມນັກຂ່າວລາວ, ຊ່ຽວຊານດ້ານສື່ພາກລັດ ແລະ ຜູ້ມີປະສົບການສື່ອອນ ລາຍ ເພື່ອກຳນົດຫົວຂໍ້, ເງື່ອນໄຂ ແລະ ຮູບແບບການສົ່ງຜົນງານຢ່າງລະອຽດ. ພາຍຫຼັງທີ່ສຳເລັດການປະກອບສ່ວນໃຫ້ຄຳເຫັນຕໍ່ກັບເງື່ອນໄຂການແຂ່ງຂັນແລ້ວ, ໂຄງການຈະໄດ້ປະກາດການແຂ່ງຂັນຜ່ານສື່ອອນລາຍສຳລັບພາກຜົນລະເມືອງທົ່ວ ໄປ ແລະ ພາກອົງການຈັດຕັ້ງທາງສັງຄົມ ພ້ອມທັງ, ມີການແຈ້ງການເຊີນຊວນໃຫ້ ຜູ້ເຂົ້າຮ່ວມນັກຂ່າວພາກລັດ ໄດ້ສົ່ງຜົນງານເຂົ້າມາປະກວດແຂ່ງຂັນ ແລະ ຄັດ ເລືອກເອົາຜົນງານທີ່ດີເດັ່ນທີ່ສຸດ.



